ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0595/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 26 ມີນາ 2021

# <u>**ໜັງສືແຈ້ງເຊີນ**</u>

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 1/2021 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ວັນທີ 09 ກຸມພາ 2021.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“**ບໍລິສັດ**”) ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ໃນວັນທີ **09 ເມສາ 2021** ເວລາ **15:00** ໂມງ (ເລີ່ມລົງທະບຽນເວລາ **13:30** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020, ໃນວັນທີ **10 ມີນາ 2021**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ປະທານສະພາບໍລິຫານ</u>

ພະແນກງານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

ປອ. ຄຳມະນີ ອິນທິລາດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

**<u>ເອກະສານຄັດຕິດ:</u>**

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020.
2. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021.
3. ລາຍງານການເງິນປະຈຳປີ 2020.
4. ຊີວະປະຫວັດຫຍໍ້ ຂອງຄະນະສະພາບໍລິຫານຜູ້ໃໝ່ ແລະ ຮອງຜູ້ອຳນວຍການໃຫຍ່ຜູ້ໃໝ່.
5. ໃບມອບສັນທະ.
6. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
7. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020.

**<u>ໝາຍເຫດ</u>**:

1. ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໄດ້ຂະຫຍາຍເປັນວົງກວ້າງໃນຫຼາຍປະເທດ. ເພື່ອປ້ອງກັນ, ສະກັດກັ້ນບໍ່ໃຫ້ມີການຕິດເຊື້ອ ແລະ ແຜ່ລະບາດ, ຂໍແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຊາບຄື:
   - 1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +85621 454361-4. ເລີ່ມແຕ່ວັນທີ **26 ມີນາ 2021.**
   - 1.2 ຜູ້ຖືຮຸ້ນສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງປະຊຸມຜູ້ຖືຮຸ້ນມາກ່ອນມື້ປະຊຸມ ແລະ ບໍລິສັດຈະຕອບຄຳຖາມໃນບົດບັນທຶກກອງປະຊຸມ.
   - 1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ຕາມ **<u>ເອກະສານຄັດຕິດ</u>** 5 ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍ **(✔)** ເພື່ອເລືອກເອົາກຳມະການອິດສະຫຼະຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: edlgenhq@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກ ເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 09 ເມສາ 2021.**
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ນາງ ໂພຄິນ ອັບໄພ ໂທ: (856-20) 5454 9978, ທ່ານ ອິນປັນ ບໍລິຫານ ໂທ: (856-20) 5559 2263 ແລະ ທ່ານ ພຸດທະສອນ ອິນທະປັນຍາ ໂທ: (856-20) 5554 1155 ໃນໂມງລັດຖະການ.

**ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ.**

**<u>ລາຍລະອຽດ</u>**:

ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ.

**I. ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019**

1. ກ່ຽວກັບວາລະທີ 1,2,3,4,5,6,7,8 ແລະ 9 ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງປະຊຸມສາມັນຜູ້ຖືຮຸ້ນແລ້ວ.

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປີຜ່ານມາ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

**ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021.**

**<u>ລາຍລະອຽດ</u>**:

ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021 ໄດ້ຈັດຂຶ້ນໃນວັນທີ **03 ມີນາ 2021**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021, ວັນທີ 03 ມີນາ 2021.

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 3. ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2020 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2020.**

**<u>ລາຍລະອຽດ</u>**:

ອີງຕາມການມອບອຳນາດ ຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2020 ຂາດທຶນເປັນຈຳນວນເງິນ **15,53** ຕື້ກີບ, ເນື່ອງມາຈາກສະພາບອາກາດໃນລະດູຝົນບໍ່ເອື້ອອຳນວຍ, ແຫ້ງແລ້ງ, ຝົນບໍ່ຕົກຖືກຕາມລະດູການ ສິ່ງຜົນເຮັດໃຫ້ບໍ່ມີນ້ຳພຽງພໍເຂົ້າໃນການຜະລິດພະລັງງານໄຟຟ້າ ແລະ ເຮັດໃຫ້ການຜະລິດບໍ່ໄດ້ຕາມແຜນການທີ່ວາງໄວ້; ລວມທັງການຜະລິດ ຂອງບັນດາເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ບໍລິສັດເຂົ້າຖືຮຸ້ນ ກໍ່ບໍ່ສາມາດຜະລິດພະລັງງານໄຟຟ້າໄດ້ຕາມແຜນການ. ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ.

ບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2020 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍ່ມີກຳໄລໃນການດຳເນີນທຸລະກິດ.

**ຄຳເຫັນຂອງສະພາບໍລິຫານ:**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2020 ແລະ ບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2020.

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4. ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2020 ລວມທັງລາຍງານການເງິນຂອງບໍລິສັດ ປີ 2020 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2021.**

**ລາຍລະອຽດ:**

**I. ລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2020**

ການດຳເນີນທຸລະກິດຂອງ ຜ-ຟຟລ ໃນປີ 2020 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ (ຟຟລ) ຕາມສັນຍາຊື້-ຂາຍໄຟຟ້າ (PPA) ແລະ ດຳເນີນການຕາມກົດໝາຍແລະກົດລະບຽບຕ່າງໆ ຂອງບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜ-ຟຟລ ມີທຶນຈົດທະບຽນ ຈຳນວນ 6.717,21 ຕື້ກີບ ແລະ ມີຮຸ້ນສາມັນ ເທົ່າກັບ 1.679.303.697 ຮຸ້ນ. ຜົນການດຳເນີນທຸລະກິດໃນປີ 2020 ສາມາດສັງລວມໄດ້ດັ່ງນີ້:

**1. ກຳລັງຕິດຕັ້ງ ແລະ ການຜະລິດ:**

ກຳລັງຕິດຕັ້ງທັງໝົດມີ 1.649 ເມກາວັດ (MW), ໃນນີ້ລວມມີ ເຂື່ອນໄຟຟ້າພະລັງງານນ້ຳຢູ່ໃນການຄຸ້ມຄອງ ຈຳນວນ 10 ເຂື່ອນ ລວມກຳລັງຕິດຕັ້ງ 699 MW, ການເຂົ້າຖືຮຸ້ນໃນເຂື່ອນໄຟຟ້າພະລັງງານນ້ຳ ຂອງຜູ້ຜະລິດໄຟຟ້າເອກະລາດ ຈຳນວນ 14 ເຂື່ອນ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ ຈຳນວນ 930,80 MW ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ ຈຳນວນ 19,2 MW.

ໃນປີ 2020, ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ສາມາດຜະລິດພະລັງງານໄຟຟ້າໄດ້ເທົ່າກັບ **2.303,55 GWh.** ການຜະລິດຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ສາມາດຜະລິດໄດ້ **3.685,80 GWh** ຕາມສັດສ່ວນຖືຮຸ້ນ, ແລະ ການຜະລິດຈາກ ບໍລິສັດ ອີດີແອວ-ເຈັນ ໂຊລ່າພາວເວີ້ ຈຳກັດ ປະຕິບັດໄດ້ **25,55 GWh** ຕາມສັດສ່ວນຖືຮຸ້ນ. ດັ່ງນັ້ນ, ໃນປີ 2020 ຜ-ຟຟລ ສາມາດການຜະລິດພະລັງງານໄຟຟ້າ ໄດ້ທັງໝົດ **6.014,90 GWh.**

2. **ລາຍຮັບ ແລະ ລາຍຈ່າຍ.**

**ດ້ານລາຍຮັບ**: ລາຍຮັບ ຂອງ ຜ-ຟຟລ ປະກອບດ້ວຍ ລາຍຮັບຈາກການຂາຍ ກະແສໄຟຟ້າ ໃຫ້ແກ່ ຟຟລ, ການຮັບຮູ້ຜົນກຳໄລ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນບັນດາໂຄງການເຂື່ອນໄຟຟ້າຜູ້ຜະລິດໄຟຟ້າເອກະລາດ (IPPs) ແລະ ລາຍຮັບອື່ນໆ ໂດຍມີລາຍລະອຽດດັ່ງນີ້:

- ລາຍຮັບຈາກການຂາຍກະແສໄຟຟ້າ ໃຫ້ແກ່ ຟຟລ ລວມເປັນເງິນ **1.138,18** ຕື້ກີບ.
- ຜົນກຳໄລ ຈາກການລົງທຶນໃນບັນດາໂຄງການໄຟຟ້າຜູ້ຜະລິດໄຟຟ້າເອກະລາດ ຈຳນວນ **498,70** ຕື້ກີບ.
- ລາຍຮັບອື່ນໆ ລວມເປັນເງິນ **38,13** ຕື້ກີບ.

ດັ່ງນັ້ນ, ຕົວເລກລາຍຮັບ ລວມທັງໝົດ ເທົ່າກັບ **1.675,01** ຕື້ກີບ.

**ດ້ານລາຍຈ່າຍ**: ລາຍຈ່າຍໃນການດຳເນີນທຸລະກິດ ປະກອບດ້ວຍ: ລາຍຈ່າຍຕົ້ນທຶນການຂາຍ, ລາຍຈ່າຍການດຳເນີນງານ, ລາຍຈ່າຍຈາກຂາດທຶນອັດຕາແລກປ່ຽນ, ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍອາກອນກຳໄລ, ໂດຍມີລາຍລະອຽດດັ່ງນີ້:

- ລາຍຈ່າຍຕົ້ນທຶນການຂາຍ ຈຳນວນ **553,12** ຕື້ກີບ.
- ລາຍຈ່າຍການດຳເນີນງານ ຈຳນວນ **181,98** ຕື້ກີບ
- ລາຍຈ່າຍ ຂາດທຶນຈາກອັດຕາແລກປ່ຽນ ຈຳນວນ **20,02** ຕື້ກີບ
- ລາຍຈ່າຍດອກເບ້ຍ ຈຳນວນ **741,12** ຕື້ກີບ

ດັ່ງນັ້ນ, ຕົວເລກລາຍຈ່າຍ ລວມທັງໝົດ ເທົ່າກັບ **1.496,24** ຕື້ກີບ.

3. **ກຳໄລ**

ໃນປີ 2020 ຜ-ຟຟລ ມີລາຍຮັບລວມທັງໝົດ **1.675,01** ຕື້ກີບ ແລະ ລາຍຈ່າຍລວມ **1.496,24** ຕື້ກີບ, ເຮັດໃຫ້ມີກຳໄລສຸດທິ ເທົ່າກັບ **178,77** ຕື້ກີບ.

4. **ການປະຕິບັດພັນທະ ຕໍ່ລັດຖະບານ.**

ຜ-ຟຟລ ໄດ້ປະຕິບັດການມອບພັນທະໃຫ້ແກ່ ລັດຖະບານ ຢ່າງເປັນປົກກະຕິ ແລະທັນເວລາ. ການມອບພັນທັນໃຫ້ແກ່ລັດຖະບານ ປະຈຳປີ 2020 ລວມມີ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນເງິນປັນຜົນ 10%, ອາກອນມູນຄ່າເພີ່ມ, ອາກອນລາຍໄດ້ຂອງບຸກຄົນ ລວມເປັນເງິນທັງໝົດ 46,47 ຕື້ກີບ.

5. **ດ້ານບຸກຄະລາກອນ ແລະ ການພັດທະນາຊັບພະຍາກອນມະນຸດ.**

ຜ-ຟຟລ ປະກອບມີ ຈຳນວນບຸກຄະລາກອນ ຢູ່ໃນການຄຸ້ມຄອງ ທັງໝົດ 773 ຄົນ, ຍິງ 124 ຄົນ. ໂດຍອີງຕາມວິໄສທັດ ແລະ ນະໂຍບາຍ ຕໍ່ກັບວຽກງານພັດທະນາບຸກຄະລາກອນ, ການຍົກລະດັບ ທາງດ້ານວິຊາສະເພາະ ແລະ ການຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ລວມທັງໝົດ 1029 ເທື່ອຄົນ.

6. **ກິດຈະກຳວຽກງານສິ່ງແວດລ້ອມ-ສັງຄົມ.**

ຜ-ຟຟລ ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ເປັນພິເສດກ່ຽວກັບວຽກງານສິ່ງແວດລ້ອມແລະສັງຄົມ. ໃນປີ 2020, ຜ-ຟຟລ ໄດ້ອະນຸມັດຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ-ສັງຄົມ ຈຳນວນ 1,89 ຕື້ກີບ ໂດຍມີລາຍລະອຽດດັ່ງນີ້:

- ຈັດຕັ້ງປະຕິບັດວຽກງານພື້ນຖານໂຄງລ່າງ ແລະ ວຽກງານສິ່ງແວດລ້ອມ-ສັງຄົມໃນ 07 ເຂື່ອນເປັນເງິນຈຳນວນ 1,43 ຕື້ກີບ ເຊັ່ນ: ການສ້າງແຜນຄຸ້ມຄອງປ່າໄມ້ເຂື່ອນໄຟຟ້າເຊເສັດ 1-2, ການສ້າງໂຮງຮຽນປະຖົມແຊລະ

ບຳຫຼຸງໃໝ່ ແລະ ສ້ອມແປງໂຮງຮຽນມັດທະຍົມວັງເວີນເຂື່ອນໄຟຟ້າແຊລະບຳ, ການສ້າງຕາຂ່າຍໄຟຟ້າ ແລະ ຕິດຕັ້ງໝໍ້ແປງເຂົ້າໃນໂຮງຮຽນປະຖົມແຊລະບຳ, ການກໍ່ສ້າງທາງເບຕົງເຂົ້າໂຮງຮຽນບ້ານພູປ່າມັນເຂື່ອນໄຟຟ້ານ້ຳເລີກເປັນ ຕົ້ນ.

- ຈັດຕັ້ງປະຕິບັດວຽກສິ່ງແວດລ້ອມ-ສັງຄົມ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ເປັນເງິນ 0,38 ຕື້ກີບ.
- ການລົງຕິດຕາມສະພາບການດຳເນີນງານ 7 ເຂື່ອນ ຂອງ ກົມທຸລະກິດພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເງິນ 0,08 ຕື້ກີບ.

**7. ວຽກງານນິຕິກຳການລົງທຶນ**

- ກະກຽມລົງນາມສັນຍາສຳປະທານກັບລັດຖະບານ ສຳລັບໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.
- ກະກຽມການໂອນໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍຈັກເບີ 7 ແລະ 8.
- ກະກຽມລາຍການຊັບສິນການໂອນໂຄງການເຂື່ອນໄຟຟ້າທີ່ ຟຟລ ລົງທຶນ 100% ປະກອບມີ: ເຂື່ອນໄຟຟ້ານ້ຳຈຽນ, ເຂື່ອນໄຟຟ້າເຊເສັດ3 ແລະ ເຂື່ອນໄຟຟ້ານ້ຳຄານ 3.

**8. ການລະດົມທຶນ**

ໃນວັນທີ 21 ສິງຫາ 2020, ຜ-ຟຟລ ສຳເລັດການເຊັນສັນຍາສິນເຊື່ອກັບ ທະນາຄານຫວຽດຕິນລາວ ຈຳກັດ ມູນຄ່າ 190 ຕື້ກີບ ເພື່ອເປັນເງິນທຶນໝູນວຽນເສີມສະພາບຄ່ອງໃຫ້ແກ່ບໍລິສັດ.

## II. <u>ແຜນການດຳເນີນທຸລະກິດຂອງບໍລິສັດປີ 2021</u>

### 1. <u>ການຜະລິດ</u>

- **<u>ກຳລັງການຜະລິດ:</u>**

- ເຂື່ອນໄຟຟ້າທີ່ຂຶ້ນກັບ ຜ-ຟຟລ ຈຳນວນ 13 ແຫ່ງ ລວມກຳລັງຕິດຕັ້ງ **886 MW**
- ເຂື່ອນໄຟຟ້າທີ່ ຜ-ຟຟລ ເຂົ້າຖືຮຸ້ນ ຈຳນວນ 16 ແຫ່ງ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ **982,80 MW**
- EDL-Gen Solar ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ **19,20 MW.**

**ລວມກຳລັງຕິດຕັ້ງທັງໝົດ 1.888 MW**

- **<u>ແຜນການຜະລິດພະລັງງານໄຟຟ້າ:</u>**

- ຕົວເລກແຜນການຜະລິດ ຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ 3.271,73 GWh.
- ຕົວເລກແຜນການຜະລິດ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ 4.771,31 GWh ຕາມສັດສ່ວນຖືຮຸ້ນ.
- ຕົວເລກແຜນການຜະລິດຈາກ ບໍລິສັດ EDL-Gen Solar ເທົ່າ 29,38 GWh ຕາມສັດສ່ວນຖືຮຸ້ນ.

**ລວມຕົວເລກແຜນການຜະລິດພະລັງງານໄຟຟ້າ ໃນປີ 2021 ທັງໝົດເທົ່າກັບ 8.072,42 GWh**

### 2. <u>ການຈຳໜ່າຍພະລັງງານໄຟຟ້າ.</u>

- ແຜນການຈຳໜ່າຍຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ **3.218,10 GWh**.
- ແຜນການຈຳໜ່າຍ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ **4.771,31 GWh** ໂດຍອີງຕາມສັດສ່ວນການຖືຮຸ້ນ.
- ແຜນການຈຳໜ່າຍ ຈາກໂຄງການ EDL-Gen Solar ເທົ່າກັບ **29,38 GWh** ຕາມສັດສ່ວນຖືຮຸ້ນ.

**ລວມຕົວເລກແຜນການຈຳໜ່າຍພະລັງງານໄຟຟ້າ ໃນປີ 2021 ທັງໝົດເທົ່າກັບ 8.018,79 GWh**

**3. ການລົງທຶນເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ**

ໃນປີ 2021, ຜ-ຟຟລ ຈະສືບຕໍ່ລົງທຶນໃນໂຄງການຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ຂອງ ຜ-ຟຟລ ລວມທັງໂຄງການໃໝ່ອື່ນໆ ເຊັ່ນ:

- **ຮຸ້ນໃນໂຄງການເຂື່ອນ IPPs ທີ່ລົງທຶນໂດຍກົງ**
  1. ເຂື່ອນໄຟຟ້ານ້ຳພູນ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 51% 23 MW.
  2. ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 80% 108 MW.
  3. ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 60% 9 MW.
  4. ເຂື່ອນໄຟຟ້ານ້ຳດິກ 1, 2 ແລະ 3 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 70% 28 MW.
- **ໂຄງການພາກຂະຫຍາຍ**
  1. ເຂື່ອນໄຟຟ້າພາກຂະຫຍາຍ ເຊລະບຳ ກຳລັງຕິດຕັ້ງ 8 MW.
  2. ເຂື່ອນໄຟຟ້າພາກຂະຫຍາຍເຊເສັດ 2 ກຳລັງຕິດຕັ້ງ 10 MW.

**4. ການມອບພັນທະໃຫ້ລັດ**

ຜ-ຟຟລ ມີພັນທະໃຫ້ລັດ ປະກອບດ້ວຍ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຈຳໜ່າຍກະແສໄຟຟ້າ, ອາກອນເງິນປັນຜົນ 10%, ອາກອນມູນຄ່າເພີ່ມ 10%, ອາກອນກຳໄລ ແລະ ອາກອນລາຍໄດ້ຂອງບຸກຄົນ.

**5. ການພັດທະນາຊັບພະຍາກອນມະນຸດ**

ໂດຍແນໃສ່ການສ້າງບຸກຄະລາກອນ ຂອງ ຜ-ຟຟລ ໃຫ້ເປັນມືອາຊີບ, ສາມາດປະຕິບັດວຽກງານໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບສູງ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງການດຳເນີນທຸລະກິດໃນອະນາຄົດ, ບໍລິສັດໄດ້ເອົາໃຈໃສ່ ວາງແຜນໄລຍະສັ້ນ ແລະ ໄລຍະຍາວ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກຳມະກອນ ຢ່າງເປັນລະບົບ, ໂດຍສະເພາະ ຄວາມຮູ້ພື້ນຖານໃນການປະຕິບັດລະບຽບການ, ການຍົກສູງວິຊາສະເພາະທາງດ້ານເຕັກນິກວິຊາການ. ໃນປີ 2021, ຜ-ຟຟລ ຈະໄດ້ສືບຕໍ່ສ້າງວິຊາການຊຳນານງານ, ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ຝຶກອົບຮົມດ້ານການດຳເນີນທຸລະກິດການເງິນ, ບັນດາຂໍ້ກຳນົດກົດລະບຽບຂອງວຽກງານຕະຫຼາດຫຼັກຊັບ. ແຜນພັດທະນາບຸກຄະລາກອນຂອງ ຜ-ຟຟລ ໄດ້ກວມເອົາດ້ານການບໍລິຫານ, ດ້ານການເງິນ ແລະ ເຕັກນິກວິຊາການຕ່າງໆ ໂດຍມີແຜນຈັດສົ່ງເຂົ້າຝຶກອົບຮົມ ທີ່ສູນຝຶກ ຟຟລ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ.

**6. ວຽກງານສິ່ງແວດລ້ອມ ແລະ ສັງຄົມ**

ເພື່ອເຮັດໃຫ້ການດຳເນີນທຸລະກິດຜະລິດພະລັງງານໄຟຟ້າ ໃນການສືບຕໍ່ປະກອບສ່ວນໃຫ້ມີການພັດທະນາ ແລະ ຄວາມຍືນຍົງ ຕໍ່ກັບສັງຄົມ ແລະ ທຳມະຊາດແວດລ້ອມບໍລິເວນເຂື່ອນ, ໃນປີ 2021 ຜ-ຟຟລ ມີແຜນວຽກງານສິ່ງແວດລ້ອມ-ສັງຄົມ ໂດຍແບ່ງອອກເປັນ 2 ພາກສ່ວນ ຄື: (1) ການປະຕິບັດພັນທະຕາມສັນຍາສຳປະທານ ເຊັ່ນ: ວຽກງານຄຸ້ມຄອງອ່າງໂຕ່ງ, ວຽກງານຄຸ້ມຄອງສິ່ງແວດລ້ອມອ້ອມຂ້າງເຂື່ອນ ແລະ ຄຸ້ມຄອງຄຸນນະພາບນ້ຳ; (2) ການປະກອບສ່ວນຕໍ່ສັງຄົມ ແລະ ພັດທະນາຊຸມຊົນອ້ອມຂ້າງເຂື່ອນ ໂດຍການມີສ່ວນຮ່ວມຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

**ຄຳເຫັນຂອງສະພາບໍລິຫານ:**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດ ເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງລາຍງານການເງິນຂອງບໍລິສັດ ປີ 2020 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2021.

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2020, ການກຳນົດວັນປິດປື້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.**

**ລາຍລະອຽດ:**

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2020 ເປັນຈຳນວນທັງໝົດ **178,77** ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກກຳໄລສະສົມໄວ້ໃນຊຸມປີຜ່ານມາ ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປື້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປື້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **23 ເມສາ 2021** ໃນອັດຕາຮຸ້ນລະ **100** ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ **167,93** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **12 ພຶດສະພາ 2021**.

**ຄຳເຫັນຂອງສະພາບໍລິຫານ:**

ການສະເໜີຈ່າຍເງິນປັນຜົນຂອງບໍລິສັດ ແມ່ນຖືກປະຕິບັດຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ ແລະ ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2020, ການກຳນົດວັນປິດປື້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນດັ່ງກ່າວ.

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ; ການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ.**

**<u>ລາຍລະອຽດ:</u>**

ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານບໍລິສັດໄດ້ດຳເນີນໄປຢ່າງຕໍ່ເນື່ອງ ແລະ ມີຫຼາຍພາກສ່ວນມີສ່ວນຮ່ວມ, ບໍລິສັດເຫັນສົມ ຄວນສະເໜີກອງປະຊຸມພິຈາລະນາອະນຸມັດເອົາການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ, ການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ. ໂດຍມີຊີວະປະຫວັດຫຍໍ້ໃນເອກະສານຄັດຕິດ 4 ແລະ ມີລາຍຊື່ດັ່ງລຸ່ມນີ້:

1. ແຕ່ງຕັ້ງ ທ່ານ ປອ. ບຸນທະວີ ສີສຸພັນທອງ ອະດີດຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານສະພາບໍລິຫານເພີ່ມ ທັງເປັນກຳມະການສະພາບໍລິຫານອິດສະຫຼະ.
2. ແຕ່ງຕັ້ງ ທ່ານ ພົງສະຫວັດ ເສນາພອນ ປະທານສະພາບໍລິຫານບໍລິສັດພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ.
3. ແຕ່ງຕັ້ງ ທ່ານ ສົມລັດ ເມກອາກາດ ຜູ້ອຳນວຍການບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ.
4. ແຕ່ງຕັ້ງ ທ່ານ ກຸນລະພັນ ວົງນາທີ ຮອງຜູ້ອຳນວຍການ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນຮອງຜູ້ອຳນວຍການໃຫຍ່ເພີ່ມ.
5. ອະນຸມັດໃຫ້ ທ່ານ ໂກມົນຈັນ ເພັດອາສາ ພົ້ນຈາກການເປັນກຳມະການສະພາບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ເນື່ອງຈາກໄດ້ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເປັນຕົ້ນໄປ.

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ ລວມທັງການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ.

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 7. ພິຈາລະນາ ແລະ ອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.**

**<u>ລາຍລະອຽດ:</u>**

ເນື່ອງຈາກມີການປ່ຽນແປງຄະນະສະພາບໍລິຫານ ຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ ຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາອະນຸມັດການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ; ລາຍລະອຽດມີດັ່ງນີ້:

1) **<u>ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:</u>** ເພີ່ມຊື່ ແລະ ຂໍ້ມູນຂອງກຳມະການ 03 ທ່ານດັ່ງນີ້:

**ກ. ຜູ້ຖືຮຸ້ນເປັນກຳມະການ:**

1. ຊື່ ແລະ ນາມສະກຸນ: ທ່ານ ພິງສະຫວັດ ເສນາພອນ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 88, ໜ່ວຍ 28, ບ້ານ ໜອງບຶກໃຕ້, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.
2. ຊື່ ແລະ ນາມສະກຸນ: ທ່ານ ສົມລັດ ເມກອາກາດ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 722, ໜ່ວຍ 52, ບ້ານ ຕານມີໄຊ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ.

**ຂ. ຈ້າງບຸກຄົນພາຍນອກເປັນກຳມະການ**
**ກຳມະການ (ອິດສະຫຼະ / ຮອງປະທານສະພາບໍລິຫານ)**

1. ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນທະວີ ສີສຸພັນທອງ,
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 216, ໜ່ວຍ 15, ບ້ານ ສະພານທອງໃຕ້, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.

2) **<u>ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u>** ເພີ່ມຊື່ ແລະ ຂໍ້ມູນ ຂອງກຳມະການອິດສະຫຼະ ແລະ ຮອງປະທານສະພາບໍລິຫານເພີ່ມຄື:

   1. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນທະວີ ສີສຸພັນທອງ

**ກຳມະການສະພາບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປັດຈຸບັນທັງໝົດ ມີ 11 ທ່ານ.**

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອ□ນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສ□ນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ, ພ້ອມດ້ວຍການມອບອຳນາດດັ່ງກ່າວຂ້າງເທິງ.

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

# ເອກະສານຄັດຕິດ 2

**ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021, ວັນທີ 03 ມີນາ 2021**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ກອງປະຊຸມວິສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 15/03/2021

# ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2021
# ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 03 ມີນາ 2021 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ຈັນທະບູນ ສຸກອາລຸນ, ຮອງປະທານສະພາບໍລິຫານ ເປັນປະທານກອງປະຊຸມ ອີງຕາມໃບມອບສິດ ສະບັບເລກທີ 0509, ລົງວັນທີ 03/3/2021; ເນື່ອງຈາກ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ບໍລິສັດ ຕິດພາລະກິດ ບໍ່ສາມາດເຂົ້າຮ່ວມໄດ້, ຈຶ່ງໄດ້ມອບສິດໃຫ້ແກ່ ທ່ານ ຮອງປະທານສະພາບໍລິຫານດ□າເນີນການເປັນປະທານກອງປະຊຸມແທນ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 58 ທ່ານ ແລະ ມອບສັນທະຈຳນວນ 195 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 253 ທ່ານ ຖືຮຸ້ນລວມກັນທັງໝົດ 1.523.838.308 ຮຸ້ນ ເທົ່າກັບ 90,74 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ຈັນທະບູນ ສຸກອາລຸນ** ຕຳແໜ່ງ: ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. **ທ່ານ ດວງສີ ພາຣາຍົກ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
3. **ທ່ານ ຄຳເພັງ ທົນນະກອນ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
4. **ທ່ານ ສົມພິດ ແກ້ວວິຈິດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
5. **ທ່ານ ໂກມົນຈັນ ເພັດອາສາ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດນໍ້າງື່ມ 3 ພາວເວີ້ຈຳກັດ;
6. **ທ່ານ ຄຳແກ້ວ ວິສີສົມບັດ** ຕຳແໜ່ງ: ກຳມະການອິດສະຫຼະ/ວ່າການຫົວໜ້າກົມບໍລິການທະນາຄານ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

| | | |
|---|---|---|
| **7. ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ** | ຕຳແໜ່ງ: | ກຳມະການອິດສະຫຼະ/ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ |
| **8. ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ** | ຕຳແໜ່ງ: | ກຳມະການອິດສະຫຼະ/ຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ; |

ໂດຍອົງປະຊຸມມີ 08 ທ່ານ, ຂາດປະຊຸມ 01 ທ່ານ ເນື່ອງຈາກຕິດພາລະກິດທາງການ ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ຄື: **ທ່ານ ປອ. ຄຳມະນີ ອິນທິລາດ** ປະທານສະພາບໍລິຫານ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອຳ ນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ນອກຈາກນັ້ນ, ທ່ານປະທານໄດ້ກ່າວ ແລະ ແນະນຳໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຊາບຕື່ມອີກວ່າ: ເນື່ອງຈາກສະພາບການລະບາດຂອງພະຍາດ COVID-19 ທີ່ກຳລັງເປັນໄພຄຸກຄາມ ແລະ ຍັງສືບຕໍ່ການລະບາດຢູ່ໃນໂລກ. ສຳລັບຢູ່ປະເທດລາວ ກໍຄື ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພວກເຮົາ ກໍໄດ້ປະຕິບັດຕາມຄຳສັ່ງ ຂອງ ທ່ານນາຍົກລັດຖະມົນຕີ, ຄຳແນະນຳຂອງຄະນະສະເພາະກິດ, ແລະ ປະຕິບັດຕາມນິຕິກຳອື່ນໆທີ່ກ່ຽວຂ້ອງ ທີ່ທາງລັດຖະບານ ແລະ ຄະນະສະເພາະກິດ ໄດ້ອອກນະໂຍບາຍຕ່າງໆ ມາເປັນແຕ່ລະໄລຍະ. ເຖິງແມ່ນວ່າຕົວເລກຜູ້ຕິດເຊື້ອຈະຢູ່ຄົງທີ່ ແຕ່ພວກເຮົາກໍຕ້ອງໄດ້ສືບຕໍ່ມາດຕະການປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມ ເພື່ອຮັບມືກັບການລະບາດຂອງພະຍາດດັ່ງກ່າວ ທີ່ອາດຈະເກີດຂຶ້ນໄດ້ອີກ ໃນໄລຍະໃໝ່.

ສະນັ້ນ ການຈັດກອງປະຊຸມຄັ້ງນີ້ ກໍຈະຍັງຄົງສືບຕໍ່ປະຕິບັດຕາມມາດຕະການທີ່ໄດ້ປະຕິບັດໃນໄລຍະທີ່ຜ່ານມາ; ເປັນຕົ້ນພວກເຮົາໄດ້ມີການແນະນຳໃຫ້ບັນດາທ່ານຜູ້ຖືຮຸ້ນ ດາວໂຫລດເອົາບັດເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຢູ່ທີ່ເວັບໄຊທ໌ຂອງບໍລິສັດ ແລະ ເວັບໄຊທ໌ຂອງ ຕະຫລາດຫລັກຊັບລາວ, ຊຶ່ງໄດ້ແນະນຳໃຫ້ບັນດາທ່ານຜູ້ຖືຮຸ້ນມອບສັນທະໃຫ້ກຳມະການອິດສະຫຼະຂອງບໍລິສັດ ເຂົ້າຮ່ວມປະຊຸມແທນ.

ການປະຕິບັດກ່ອນເຂົ້າຫ້ອງປະຊຸມ ກໍໄດ້ມີການວັດແທກອຸນຫະພູມ ຕາມການແນະນຳຂອງໜ່ວຍງານສະເພາະກິດ ກໍຄື ກະຊວງສາທາລະນະສຸກ. ສຳລັບການນັ່ງ ກໍໄດ້ມີການເວັ້ນໄລຍະຫ່າງ ເພື່ອຮັກສາໄລຍະຫ່າງຂອງແຂກທີ່ເຂົ້າຮ່ວມກອງປະຊຸມ. ໃນກອງປະຊຸມຄັ້ງນີ້ ກໍໄດ້ງົດຈັດອາຫານຫວ່າງ ແລະ ງົດແຈກຂອງທີ່ລະນຶກ ເພື່ອຫຼີກລ່ຽງການສຳຜັດວັດຖຸສິ່ງຂອງຮ່ວມກັບຜູ້ອື່ນ ເພື່ອຄວາມປອດໄພ ແລະ ສຸຂະນາໄມຂອງຜູ້ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ດວງສີ ພາຣາຍົກ ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. **ການລົງຄະແນນສຽງ**:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.
  - * ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
  - * ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ບໍລິສັດ ໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2021 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

**ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020, ວັນທີ 24 ກໍລະກົດ 2020.**

ຜູ້ອໍານວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020, ໄດ້ປະຊຸມເມື່ອວັນທີ 24 ກໍລະກົດ 2020 ໂດຍມີລາຍລະອຽດໃນເອກະສານຄັດຕິດ ຊຶ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ ແລະ ສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກ ຜູ້ອໍານວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄໍາຄິດຄໍາເຫັນ ແລະ ມີຜູ້ຖືຮຸ້ນ 01 ທ່ານ ຈາກບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈໍາກັດ **(ບໍລິສັດ ພົງຊັບທະວີ)** ມີຄໍາຖາມຄື: ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ຈັດຂຶ້ນວັນທີ 24/7/2020 ທີ່ໄດ້ຄັດຕິດມາພ້ອມໜັງສືແຈ້ງເຊີນ ແມ່ນໄດ້ຮັບຮອງມີພຽງແຕ່ຄະນະຜູ້ອໍານວຍການໃຫຍ່ຂອງບໍລິສັດ ແລະ ສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ເທົ່ານັ້ນ, ບໍ່ໄດ້ມີຄະນະຜູ້ອໍານວຍການໃຫຍ່ ແລະ ຄະນະສະພາບໍລິຫານ ບໍລິສັດ ພົງຊັບທະວີ ເທື່ອ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ຕອບຄໍາຖາມແກ່ຜູ້ຖືຮຸ້ນຄື: ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ຄັ້ງວັນທີ 24/7/2020 ແມ່ນໄດ້ພິຈາລະນາຮັບຮອງຄະນະຜູ້ອໍານວຍການໃຫຍ່ ແລະ ຄະນະສະພາບໍລິຫານຊຸດໃໝ່ທີ່ຄົບວາລະເທົ່ານັ້ນ, ດັ່ງນັ້ນ ຈຶ່ງໄດ້ນໍາເອົາມາຮັບຮອງໃນກອງປະຊຸມຄັ້ງນີ້. ສ່ວນຄະນະໃໝ່ທີ່ມີການສະເໜີແມ່ນຈະໄດ້ນໍາມາເອົາເຂົ້າຮັບຮອງໃນກອງປະຊຸມຜູ້ຖືຮຸ້ນປະຈໍາປີຂອງບໍລິສັດ ໃນເດືອນ ເມສາ 2021.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020, ວັນທີ 24 ກໍລະກົດ 2020, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈໍານວນ 1.524.322.608 ສຽງ, ເທົ່າກັບ 99,9998 ສ່ວນຮ້ອຍ ຂອງຈໍານວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈໍານວນ 3.500 ສຽງ, ເທົ່າກັບ 0,0002 ສ່ວນຮ້ອຍ ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

**ວາລະທີ 2. ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ.**

ຜູ້ອໍານວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມໃນການອະນຸມັດແຜນການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ເພື່ອມາລົງທຶນໃນການຂະຫຍາຍທຸລະກິດໃຫ້ນັບມື້ນັບເຕີບໃຫຍ່ ແລະ/ຫຼື ເພື່ອມາຊໍາລະຄືນໜີ້ສິນເດີມທີ່ຈະຄົບກໍານົດ (Refinance ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້) ຕະຫຼອດເຖິງຄ່າໃຊ້ຈ່າຍທົ່ວໄປໃນການດໍາເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝູນວຽນຂອງບໍລິສັດ, ດັ່ງນັ້ນ ບໍລິສັດເຫັນສົມຄວນສະເໜີກອງປະຊຸມພິຈາລະນາອະນຸມັດແຜນການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ຊຶ່ງມີລາຍລະອຽດດັ່ງນີ້:

| | |
|---|---|
| ຈຳນວນວົງເງິນ: | ຈຳນວນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນເງິນອື່ນໆ. |
| ຈຸດປະສົງ: | ເພື່ອໃຊ້ສຳລັບຈຸດປະສົງໃດໜຶ່ງ ຫຼື ຫຼາຍຢ່າງລວມກັນ ເຊັ່ນ: ການລົງທຶນໃນການຂະຫຍາຍທຸລະກິດ, ການຊ□າລະຄືນໜີ້ສິນເດີມທີ່ຈະຄົບກ□ານົດ(Refinance ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້), ຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງ ເງິນທຶນໝູນວຽນຂອງບໍລິສັດ. |
| ສະກຸນເງິນ: | ສະເໜີຂາຍຮຸ້ນກູ້ ແລະ/ຫຼື ກູ້ຢືມເງິນ ດ້ວຍສະກຸນເງິນໃດກໍ່ໄດ້ )ລວມທັງສະກຸນເງິນບາດ ແລະ ສະກຸນເງິນໂດລາສະຫະລັດ). |
| ອັດຕາດອກເບ້ຍ: | ອັດຕາດອກເບ້ຍຂຶ້ນຢູ່ກັບຜົນການຈັດລະດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາວະຕະຫຼາດໃນຂະນະທີ່ສະເໜີຂາຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ໃນແຕ່ລະຄັ້ງ. |
| ອາຍຸຂອງຮຸ້ນກູ້ ແລະ ໄລຍະເວລາການກູ້ຢືມເງິນ: | ຕາມແຜນການນຳໃຊ້ທຶນ ແລະ ສະພາບຂອງຕະຫຼາດໃນໄລຍະເວລາທີ່ສະເໜີຂາຍຮຸ້ນກູ້ ແລະ ໃນຂະນະທີ່ຈະກູ້ຢືມເງິນ. |
| ວິທີການສະເໜີຂາຍ: | ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີລວມກັນ ເຊັ່ນ:<br>1) ບໍລິສັດ ສາມາດອອກແລະຈຳໜ່າຍຮຸ້ນກູ້ ທັງໝົດ ຫຼື ບາງສ່ວນ, ໃນຄັ້ງດຽວເຕັມຈຳນວນເງິນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫຼື ຫຼາຍຊຸດ ຕາມຄວາມຈຳເປັນໃນການໃຊ້ເງິນຂອງບໍລິສັດ ເຊິ່ງອາດຈະສະເໜີຂາຍໃນຕະຫຼາດປະເທດໄທ ຫຼື ຕະຫຼາດສາກົນ ໂດຍຜ່ານຮູບແບບການສະເໜີຂາຍໃຫ້ແກ່ຜູ້ລົງທຶນທົ່ວໄປ ແລະ/ຫຼື ນັກລົງທຶນສະເພາະເຈາະຈົງ ແລະ ສະເໜີຂາຍໃຫ້ແກ່ນັກລົງທຶນລາຍໃຫຍ່ ແລະ/ຫຼື ນັກລົງທຶນສະຖາບັນ ໂດຍປະຕິບັດຕາມກົດໝາຍແລະກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃນເວລາທີ່ອອກແລະສະເໜີຂາຍຮຸ້ນກູ້.<br>2) ການກູ້ຢືມເງິນ ຈາກບັນດາສະຖາບັນການເງິນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ. |

ແລະ ສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ; ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດແລະເງື່ອນໄຂ, ໄລຍະເວລາການກູ້ຢືມຫລືອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ຕົກລົງ, ລົງນາມ, ການສົ່ງມອບຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ຄະນະກຳມະການກຳກັບຫຼັກຊັບແລະຕະຫຼາດຫຼັກຊັບ ປະເທດໄທ, ທະນາຄານແຫ່ງປະເທດໄທ,

ສະມາຄົມຕະຫຼາດກາສານໜີ້ແຫ່ງປະເທດໄທ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນ ຫຼືບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈໍາໜ່າຍຫຼັກຊັບ, ຜູ້ຮັບປະກັນການອອກຈໍາໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຜູ້ຕາງໜ້າຜູ້ຖືຮຸ້ນກູ້, ຜູ້ຕາງໜ້າຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊໍາລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈໍາເປັນ ແລະ ກ່ຽວຂ້ອງໃຫ້ແກ່ການດໍາເນີນທຸລະກໍາຈົນສໍາເລັດ;

(4) ປະຕິບັດ ແລະ ດໍາເນີນວຽກງານອື່ນໆທີ່ຈໍາເປັນແລະກ່ຽວຂ້ອງ ເພື່ອການດໍາເນີນທຸລະກໍາດັ່ງກ່າວໃຫ້ສໍາເລັດ, ລວມທັງໃຫ້ມີອໍານາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອໍານາດໃນການດໍາເນີນການໃດໜຶ່ງ ດັ່ງກ່າວຂ້າງເທິງນີ້ໄດ້ທຸກປະການ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ແລະ ມອບອໍານາດໃຫ້ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ມີອໍານາດໃນການພິຈາລະນາ ແລະ ດໍາເນີນວຽກງານກ່ຽວກັບການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ດັ່ງກ່າວຂ້າງເທິງ.

ຫຼັງຈາກຜູ້ອໍານວຍການໃຫຍ່ ໄດ້ສະເໜີໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄໍາຄິດຄໍາເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄໍາຖາມ ສາມາດຖາມໄດ້ ແລະ ມີຜູ້ຖືຮຸ້ນ ມີຄໍາເຫັນຕໍ່ວາລະ 2 ດັ່ງລຸ່ມນີ້:

- **ຜູ້ຖືຮຸ້ນຈາກ ລັດວິສາຫະກິດ ໄຟຟ້າລາວ (ຟຟລ)**: ຕາງໜ້າຄະນະຜູ້ອໍານວຍການ ຟຟລ, ສໍາລັບການສະເໜີພິຈາລະນາໃນວາລະນີ້ ແມ່ນເຫັນດີສະໜັບສະໜູນໃນການອອກຮຸ້ນກູ້ ເນື່ອງຈາກວ່າມີຄວາມຈໍາເປັນທີ່ຈະນໍາໃຊ້ເງິນເພື່ອຈຸດປະສົງຕ່າງໆທີ່ທ່ານ ປະທານໄດ້ກ່າວມານັ້ນ ແຕ່ການອອກຮຸ້ນກູ້ໃນແຕ່ລະຄັ້ງແມ່ນໃຫ້ເປັນໄປຕາມແຕ່ລະໄລຍະ, ຖ້າຫາກວ່າ ມີຄວາມຈໍາເປັນໃນການຊໍາລະໜີ້ໃນບ້ວງເງິນເທົ່າໃດ, ໃນໄລຍະໃດ ກໍ່ໃຫ້ສອດຄ່ອງກັບເງິນບ້ວງນັ້ນ ແລະ ໄລຍະນັ້ນ. ສ່ວນບ້ວງເງິນກູ້ຢືມທີ່ຈະນໍາມາລົງທຶນ ແມ່ນໃຫ້ມີການສຶກສາຄົ້ນຄວ້າຢ່າງລະອຽດຕື່ມ, ພ້ອມນີ້ ສະເໜີໃຫ້ສຶກສາແຫຼ່ງເງິນກູ້ຢູ່ພາຍໃນປະເທດຕື່ມເພື່ອເປັນທາງເລືອກ.
- **ຜູ້ຖືຮຸ້ນຕາງໜ້າຈາກ ບໍລິສັດ ຣາຊ-ລາວ ບໍລິຫານ ຈໍາກັດ ແລະ ບໍລິສັດ RH International (Singapore) Corporation Pte.Limited:** ກ່ອນອື່ນຂໍສະແດງຄວາມຊົມເຊີຍຕໍ່ຄະນະນໍາຂອງ ຜ-ຟຟລ ທີ່ໃນສະພາບເສດຖະກິດທີ່ມີຄວາມຫຍຸ້ງຍາກແບບນີ້ ຍັງຮັກສາການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນໄດ້ໃນໄລຍະຜ່ານມາ. ສໍາລັບບໍລິສັດຂອງພວກເຮົາ ແມ່ນພ້ອມທີ່ຈະໃຫ້ການສະໜັບສະໜູນ ຜ-ຟຟລ ຢ່າງຕໍ່ເນື່ອງ ຖ້າໂຄງການທີ່ໄດ້ວາງແຜນໄວ້ຈະເກີດຜົນປະໂຫຍດ ແລະ ສ້າງມູນຄ່າໃຫ້ກັບ ບໍລິສັດ ແລະ ໃນນາມຜູ້ຖືຮຸ້ນກໍ່ຄາດຫວັງວ່າ ຜ-ຟຟລ ຈະສາມາດຮັກສາການຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນໄດ້ຢ່າງຕໍ່ເນື່ອງເຊັ່ນກັນ.
- **ຜູ້ຖືຮຸ້ນຈາກ ບໍລິສັດ ພົງຊັບທະວີ** ໄດ້ມີປະເດັນຂໍ້ສະເໜີໃນວາລະຄື:
    1. ກ່ຽວກັບຖານະການເງິນຂອງ ຜ-ຟຟລ, ປັດຈຸບັນໜີ້ສິນທີ່ຕິດພັນກັບບໍລິສັດພາຍນອກແມ່ນມີຫຼາຍຊໍ່າໃດ, ໂດຍສະເພາະໜີ້ຄ້າງຊໍາລະທີ່ພາກສ່ວນອື່ນຍັງບໍ່ທັນໄດ້ຊໍາລະຄົບຖ້ວນ ກໍ່ສະເໜີໃຫ້ ຜ-ຟຟລ ເລັ່ງທວງກັບພາກສ່ວນດັ່ງກ່າວ, ທັງນີ້ກໍ່ເພື່ອບໍ່ໃຫ້ ບໍລິສັດຕ້ອງໄດ້ມີຄວາມຮັບຜິດຊອບໃນການຈ່າຍດອກເບ້ຍເວລາທີ່ໄປອອກຈໍາໜ່າຍຮຸ້ນກູ້ໃນຄັ້ງນີ້, ແລະ ສະເໜີໃຫ້ ຜ-ຟຟລ ອະທິບາຍໃນຈຸດນີ້ຕື່ມ.

2. ສໍາລັບການພິຈາລະນາໃນວາລະ 2 ນີ້, ບໍລິສັດ ພົງຊັບທະວີ ຈະເຫັນດີກໍ່ຕໍ່ເມື່ອວ່າ ການໄປກູ້ຢືມໃນຄັ້ງນີ້ ທາງລູກໜີ້ຂອງ ຜ-ຟຟລ ຈະຮັບຜິດຊອບໃນການຈ່າຍດອກເບ້ຍສ່ວນທີ່ເຮົາໄປອອກຄັ້ງນີ້, ເພາະໃນປັດຈຸບັນເຫັນວ່າ ລູກໜີ້ຂອງບໍລິສັດ ຍັງເປັນໜີ້ ຜ-ຟຟລ ເປັນຈໍານວນຫຼາຍ ແລະ ມັນບໍ່ແທດເໝາະວ່າ ບໍລິສັດ ຈະໄປຢືມເງິນມາເພື່ອຮັບພາລະພຽງຝ່າຍດຽວ ເຮົາຕ້ອງມາຄົ້ນຄິດຕື່ມເພື່ອມາຮັບພາລະຮ່ວມກັນ, ດັ່ງນັ້ນ ຈຶ່ງສະເໜີໃຫ້ ຜ-ຟຟລ ໃຫ້ຄວາມກະຈ່າງແຈ້ງຕື່ມ. ຕໍ່ມາ **ທ່ານ ດວງສີ ພາຣາຍົກ, ກໍາມະການ / ຜູ້ອໍານວຍການໃຫຍ່ ຜ-ຟຟລ** ໄດ້ມີຄໍາເຫັນ ຕໍ່ຄໍາຖາມດັ່ງກ່າວຄື: ຕາມຄວາມເປັນຈິງຄືທີ່ບັນດາທ່ານໄດ້ຮັບຊາບແລ້ວວ່າ ລູກຄ້າຂອງ ຜ-ຟຟລ ແມ່ນມີແຕ່ ຟຟລ ພຽງລາຍດຽວ, ແຕ່ໄລຍະຜ່ານມານີ້ ເຫັນວ່າການຊໍາລະໜີ້ສິນ ຂອງ ຟຟລ ມີທ່າອ່ຽງດີຂຶ້ນຫຼາຍ ເຖິງແມ່ນວ່າຈະບໍ່ໄດ້ຮັບການຊໍາລະເຕັມຈໍານວນໃບບິນກໍ່ຕາມ, ດັ່ງນັ້ນ ຜ-ຟຟລ ມີຄວາມເຊື່ອໝັ້ນວ່າການອອກຮຸ້ນກູ້ຄັ້ງນີ້ຈະສາມາດແກ້ໄຂສະພາບຄ່ອງການດໍາເນີນທຸລະກິດຂອງບໍລິສັດໃຫ້ດີຂຶ້ນ ບວກກັບການສະໜັບສະໜູນ ຈາກ ຟຟລ.

- **ຜູ້ຖືຮຸ້ນຈາກ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ສະແດງຄວາມເປັນຫ່ວງຕໍ່ກັບການອອກຮຸ້ນກູ້ປີ 2021 ເນື່ອງຈາກການອອກຄັ້ງນີ້ເປັນສະກຸນເງິນບາດ ຫຼື ເງິນຕາຕ່າງປະເທດ ເພາະແຫຼ່ງລາຍຮັບຂອງ ຜ-ຟຟລ ຫຼັກໆ ເປັນສະກຸນເງິນກີບ, ເພາະສະນັ້ນຈຶ່ງເປັນຫ່ວງເວລາຊໍາລະຄືນເປັນເງິນຕາຕ່າງປະເທດອາດຈະພົບບັນຫາເລື່ອງອັດຕາແລກປ່ຽນ.

ແລະ ທ່ານ ຮອງປະທານສະພາບໍລິຫານໄດ້ມີຄໍາເຫັນຕື່ມຕໍ່ກັບ ຄໍາຖາມ, ຄໍາເຫັນ ແລະ ຂໍ້ສະເໜີຕ່າງໆ ທີ່ຜູ້ຖືຮຸ້ນໄດ້ກ່າວມານັ້ນວ່າທາງຜູ້ບໍລິຫານ ຂອງ ຜ-ຟຟລ ໄດ້ຮັບຊາບຕໍ່ກັບຄວາມເປັນຫ່ວງ ແລະຈະເອົາບັນຫາດັ່ງກ່າວໄປຄົ້ນຄວ້າຕື່ມ. ພ້ອມດຽວກັນນີ້ ຍັງໄດ້ຢ້ຳເຖິງຄວາມສໍາຄັນຂອງການອອກຈໍາໜ່າຍຮຸ້ນກູ້ໃນຄັ້ງນີ້ວ່າມີຄວາມຈໍາເປັນ ແລະ ເຫັນໄດ້ວ່າຈະຊ່ວຍປັບປຸງສະພາບຄ່ອງການດໍາເນີນທຸລະກິດຂອງ ຜ-ຟຟລ ໃຫ້ດີຂຶ້ນໂດຍທີ່ທຸກຝ່າຍຕ້ອງໄດ້ຮ່ວມກັນແກ້ໄຂ ແລະໃຫ້ການສະໜັບສະໜູນ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດແຜນການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ແລະ ມອບອໍານາດໃຫ້ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ມີອໍານາດໃນການພິຈາລະນາ ແລະ ດໍາເນີນວຽກງານກ່ຽວກັບການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງ **ຫຼາຍກວ່າສອງສ່ວນສາມ (2/3)** ຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ **ມີຮຸ້ນຮ່ວມກັນຢ່າງໜ້ອຍ 80%** ຂອງຈໍານວນຮຸ້ນທີ່ຖອກແລ້ວທັງໝົດ.

**ມະຕິ:** **ກອງປະຊຸມໄດ້ມີມະຕິອະນຸມັດແຜນການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນອື່ນໆ ເພື່ອລົງທຶນໃນການຂະຫຍາຍທຸລະກິດ, ການຊໍາລະຄືນໜີ້ສິນເດີມທີ່ຈະຄົບກໍານົດ (Refinance ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້), ຄ່າໃຊ້ຈ່າຍທົ່ວໄປໃນການດໍາເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝູນວຽນ ຂອງບໍລິສັດ, ສ່ວນບ້ວງທີ່ຈະນໍາມາລົງທຶນ ຫຼື ໃຊ້ຈ່າຍຕ່າງໆໃນການດໍາເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນໝູນວຽນຂອງບໍລິສັດແມ່ນໃຫ້ເປັນເອກະພາບໃນສະພາບໍລິຫານໃນແຕ່ລະໜ້າວຽກ. ແລະ ມອບອໍານາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ມີອໍານາດໃນການພິຈາລະນາ ແລະ ດໍາເນີນວຽກງານ ກ່ຽວກັບການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ; ມີລາຍລະອຽດດັ່ງຕໍ່ໄປນີ້:**

| | |
|---|---|
| ຈຳນວນວົງເງິນ: | ຈຳນວນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນເງິນອື່ນໆ. |
| ຈຸດປະສົງ: | ເພື່ອໃຊ້ສຳລັບຈຸດປະສົງໃດໜຶ່ງ ຫຼື ຫຼາຍຢ່າງລວມກັນ ເຊັ່ນ: ການລົງທຶນໃນການຂະຫຍາຍທຸລະກິດ, ການຊຳລະຄືນໜີ້ສິນເດີມທີ່ຈະຄົບກຳນົດ(Refinance ລວມທັງ ຮຸ້ນກູ້ ແລະ/ຫຼື ເງິນກູ້), ຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດຂອງບໍລິສັດ ລວມເຖິງ ເງິນທຶນໝູນວຽນຂອງບໍລິສັດ. |
| ສະກຸນເງິນ: | ສະເໜີຂາຍຮຸ້ນກູ້ ແລະ/ຫຼື ກູ້ຢືມເງິນ ດ້ວຍສະກຸນເງິນໃດກໍ່ໄດ້ )ລວມທັງ ສະກຸນເງິນບາດ ແລະ ສະກຸນເງິນໂດລາສະຫະລັດ). |
| ອັດຕາດອກເບ້ຍ: | ອັດຕາດອກເບ້ຍຂຶ້ນຢູ່ກັບຜົນການຈັດລະດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາວະຕະຫຼາດໃນຂະນະທີ່ສະເໜີຂາຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ໃນແຕ່ລະຄັ້ງ. |
| ອາຍຸຂອງຮຸ້ນກູ້ ແລະ ໄລຍະເວລາການກູ້ຢືມເງິນ: | ຕາມແຜນການນຳໃຊ້ທຶນ ແລະ ສະພາບຂອງຕະຫຼາດໃນໄລຍະເວລາທີ່ສະເໜີຂາຍຮຸ້ນກູ້ ແລະ ໃນຂະນະທີ່ຈະກູ້ຢືມເງິນ. |
| ວິທີການສະເໜີຂາຍ: | ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີລວມກັນ ເຊັ່ນ:<br>1) ບໍລິສັດ ສາມາດອອກແລະຈຳໜ່າຍຮຸ້ນກູ້ ທັງໝົດ ຫຼື ບາງສ່ວນ, ໃນຄັ້ງດຽວເຕັມຈຳນວນເງິນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫຼື ຫຼາຍຊຸດ ຕາມຄວາມຈາເປັນໃນການໃຊ້ເງິນຂອງບໍລິສັດ ເຊິ່ງອາດຈະສະເໜີຂາຍໃນຕະຫຼາດປະເທດໄທ ຫຼື ຕະຫຼາດສາກົນ ໂດຍຜ່ານຮູບແບບການສະເໜີຂາຍໃຫ້ແກ່ຜູ້ລົງທຶນທົ່ວໄປ ແລະ/ຫຼື ນັກລົງທຶນສະເພາະເຈາະຈົງ ແລະສະເໜີຂາຍໃຫ້ແກ່ນັກລົງທຶນລາຍໃຫຍ່ ແລະ/ຫຼື ນັກລົງທຶນສະຖາບັນ ໂດຍປະຕິບັດຕາມກົດໝາຍແລະກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃນເວລາທີ່ອອກແລະສະເໜີຂາຍຮຸ້ນກູ້.<br>2) ການກູ້ຢືມເງິນ ຈາກບັນດາສະຖາບັນການເງິນຕ່າງໆ ທັງພາຍໃນ ແລະຕ່າງປະເທດ. |

ແລະ ມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ; ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ຈາກສະຖາບັນການເງິນ ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດແລະເງື່ອນໄຂ, ໄລຍະເວລາການກູ້ຢືມຫລື ອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈຳໜ່າຍຮຸ້ນກູ້ອັດຕາດອກເບ້ຍ, ສະກຸນເງິນ,

ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີ ຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ຕົກລົງ, ລົງນາມ, ການສົ່ງມອບ ຄໍາຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈໍາເປັນ ແລະ ກ່ຽວຂ້ອງ ກັບການອອກຈໍາໜ່າຍຮຸ້ນກູ້ ແລະ / ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕະຫຼາດຫຼັກຊັບລາວ, ຄະນະກໍາມະການກໍາກັບຫຼັກຊັບແລະຕະຫຼາດຫຼັກຊັບປະເທດໄທ, ທະນາຄານແຫ່ງປະເທດໄທ, ສະມາຄົມຕະຫຼາດກາສານໜີ້ແຫ່ງປະເທດໄທ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈໍາໜ່າຍຫຼັກຊັບ, ຜູ້ຮັບປະກັນການອອກຈໍາໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຜູ້ຕາງໜ້າຜູ້ຖືຮຸ້ນກູ້, ຜູ້ຕາງໜ້າຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊໍາລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈໍາເປັນ ແລະ ກ່ຽວຂ້ອງໃຫ້ແກ່ການດໍາເນີນທຸລະກໍາຈົນສໍາເລັດ;

(4) ປະຕິບັດ ແລະ ດໍາເນີນວຽກງານອື່ນໆ ທີ່ຈໍາເປັນແລະກ່ຽວຂ້ອງ ເພື່ອການດໍາເນີນທຸລະກໍາດັ່ງກ່າວໃຫ້ສໍາເລັດ, ລວມທັງໃຫ້ມີອໍານາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອໍານາດໃນການດໍາເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ໄດ້ທຸກປະການ.

ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈໍານວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈໍານວນຮຸ້ນທີ່ຖອກທັງໝົດດັ່ງນີ້:

(ກ) ຈໍານວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 253 ຄົນ ເທົ່າກັບ 99,22 ສ່ວນຮ້ອຍ ທຽບໃສ່ຈໍານວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ 2 ຄົນ ເທົ່າກັບ 0,78 ສ່ວນຮ້ອຍ ທຽບໃສ່ຈໍານວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(ຂ) ຈໍານວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.524.320.108 ຮຸ້ນ (ສຽງ), ເທົ່າກັບ 90,77096 ສ່ວນຮ້ອຍ ທຽບໃສ່ຈໍານວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
2. ບໍ່ເຫັນດີ 6.000 ຮຸ້ນ (ສຽງ), ເທົ່າກັບ 0,00036 ສ່ວນຮ້ອຍ ທຽບໃສ່ຈໍານວນຮຸ້ນ ທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖືວ່າໄດ້ພິຈາລະນາຄົບວາລະກອງປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄໍາຄິດຄໍາເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄໍາຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 59 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 196 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 255 ຄົນ ຖືຮຸ້ນລວມກັນ 1.524.326.108 ຮຸ້ນ ເທົ່າກັບ 90,78 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມ ແລະ ຂໍອວຍພອນໄຊແດ່ ບັນດາຄະນະຜູ້ບໍລິຫານບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຂໍອວຍພອນໄຊແດ່ ທ່ານ ຜູ້ຖືຮຸ້ນທຸກທ່ານ ແລະ ບັນດາແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:00 ໂມງ.

ປະທານກອງປະຊຸມ

(ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company)

ຈັນທະບູນ ສຸກອາລຸນ

ຮັບຮອງຖືກຕ້ອງ

ດວງສີ ພາຣາຍົກ

